# ຫມົກເຖົ່າ



ເລື່ອງໂດຍ ອຸທິນ ບຸນຍາວົງ

ຮູບປະກອບໂດຍ ວົງສະຫວັນ ດຳລົງສຸກ

ສະຫງວນລິຂະສິດ © : ອົງການພັດທະນາເດັກລາວ-ຍີ່ປຸ່ນ (SVA)

ທະບຽນອະນຸຍາດພິມ ເລກທີ: 960/ ກອ.ນວ

ຈຳນວນພິມ: 5000 ຫົວ

ພິມທີ່: ຈຳປາການພິມ

ນະຄອນຫລວງວຽງຈັນ, ສິງຫາ 2004

# ຫມົກເຖົ່າ

ເລື່ອງໂດຍ ອຸທິນ ບຸນຍາວົງ ຮູບປະກອບໂດຍ ວົງສະຫວັນ ດໍາລົງສຸກ



ຈັດພິມໂດຍ ອົງການພັດທະນາເດັກລາວ-ຍີ່ປຸ່ນ (SVA)

SHANTI VOLUNTEER ASSOCIATION

ອຸປະຖໍາໂດຍ

JICHIRO TOKYO

on the 50th Anniversary of the formation



ເມື່ອນາງປີວອາບນ້ຳແລ້ວ ຕາເວັນຍັງບໍ່ທັນລັບພູ, ແດດເຫລືອງອ່ອນຍັງທາບລົງທີ່ປາຍໄມ້ແຄມນ້ຳ ແລະສະທ້ອນເປັນເງົາເຫລື້ອມຍິບຍັບຕາມຫນ້ານ້ຳທີ່ໄຫລຊ້າໆ.



" ຕາເວັນໃກ້ຈະຕົກດິນແລ້ວ ບໍ່ຂຶ້ນບໍພວກເຈົ້າ ! "
ນາງປີວຮ້ອງໃສ່ໝູ່ທີ່ຍັງອາບນ້ຳຢູ່

" ບໍ່ ! ຊິອາບອີກຈັກໜ່ອຍ, ຂຶ້ນໄປ ກ່ອນສາ ! "

" ຊັ້ນຂ້ອຍຂຶ້ນກ່ອນເດີ້ ! "

ນາງເອົາຜ້າປຽກທີ່ປັ້ນດີ ແລ້ວພາດໃສ່ແຂນ
ພວມຈະຍ້າຍບາດຕີນ ກ້າວທຳອິດ ຂຶ້ນຕະຝັ່ງ



ກໍພໍດີສາຍຕາ ໄປພົບເອົາ
ວັດຖຸເຫລື້ອມໆ... ນາງເດ່ມື
ໄປຈັບຂຶ້ນມາເບິ່ງ,
ມັນຫນັກໆ ມັນມີຄ່າ
" ໂອ້ ! ສາຍແຂວເງິນ
ຕົວະຫນີ້ !
ແມ່ນໃຜ ມາລືມໄວ້ ! "

" ຂ້ອຍຊິເຮັດແນວໃດ ກັບສາຍແອວນີ້ດີ ?"
ນາງຫລຽວໄປອ້ອມຂ້າງ.
ຍ່ານໃຕ້ລົງໄປບໍ່ໄກ ນາງເຫັນວ່າ
ບໍ່ມີໃຜສົນໃຈເບິ່ງຕົນ



ນາງຈຶ່ງຊຸກເຊື່ອງວັດຖຸສີເງິນນັ້ນ ໄວ້ກ້ອງຜ້າປຽກ  ແລ້ວຍ່າງຂຶ້ນຕະຝັ່ງ, ມຸ່ງຫນ້າຄືນສູ່ເຮືອນ ທັງໃຈກໍເຕັ້ນບໍ່ເປັນປົກກະຕິ.

ນາງບໍ່ທັນຄຶດວ່າ ຈະໄປຖາມຫາເຈົ້າຂອງແລ້ວສົ່ງຄືນ ຫລື ຈະເອົາໄວ້ເປັນສົມບັດຂອງຕົນເອງ ເພື່ອບໍ່ໃຫ້ຄົນອື່ນມາເຫັນ.



" ເຮົາຕ້ອງຟ້າວໄປຈາກບ່ອນຫນີ້ໄວໆ ກ່ອນທີ່ໃຜຈະມາເຫັນ ! "
ນາງປີວ ບອກຕົນເອງ.



ແຕ່ທັນທີ ທີ່ນາງພົ້ນຕະຝັ່ງ ກໍພໍ້ກັບນາງອ້ອຍ ຊຶ່ງເຮັດໜ້າຫລ່າຕາຕື່ນ ເຄິ່ງຍ່າງ ເຄິ່ງແລ່ນມາ.

" ເຫັນສາຍແອວເງິນຂ້ອຍບໍ່ ? "

" ບໍ່ເຫັນໃດລະ " ນາງປີວຕອບອອກໄປ ທັງເຮັດສຽງໃຫ້ປົກກະຕິທີ່ສຸດ.



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ